**ມິຊຊາອາທິດທີ 17 ກຳນົດທຳມະດາປີ A**

**ວັນທີ 26 ກໍລະກົດ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 13, 44-52**

ໃນເວລານັ້ນ ພຣະເຢຊູເຈົ້າຊົງກ່າວຄວາມປຽບທຽບໃຫ້ປະຊາຊົນຟັງວ່າ: "ອານາຈັກສະຫວັນປຽບໄດ້ກັບຂຸມຊັບຝັງຢູ່ໃນນາແຫ່ງໜຶ່ງຄົນທີ່ພົບພໍ້ກໍເຊື່ອງໄວ້ອີກ, ແລະດ້ວຍຄວາມຍິນດີເຂົາຈະຂາຍທຸກສິ່ງທີ່ຕົວມີເພື່ອມາຊື້ນາທົ່ງນັ້ນ".

"ອານາຈັກສະຫວັນຍັງປຽບໄດ້ກັບພໍ່ຄ້າຄົນໜຶ່ງທີ່ຊອກຊື້ແກ້ວມຸກດາໜ່ວຍງາມໆເມື່ອພົບເຫັນແກ້ວໜ່ວຍລາຄາສູງແລ້ວ, ເຂົາກໍຈະໄປຂາຍທຸກສິ່ງທີ່ຕົວມີ, ເພື່ອມາຊື້ເອົາແກ້ວມຸກດາໜ່ວຍນັ້ນໄວ້".

"ອານາຈັກສະຫວັນຍັງປຽບກັບມອງຂຸມໜຶ່ງອີກທີ່ຖິ້ມລົງໄປໃນທະເລ ແລະກວາດເອົາປາທຸກຊະໜິດ. ເມື່ອປາເຕັມມອງແລ້ວ, ຊາວປະມົງກໍຈະແກ່ມອງຂຶ້ນຝັ່ງແລະນັ່ງລົງເລືອກເອົາປາແຊບດີໃສ່ກະຕ່າ; ສ່ວນປາບໍ່ແຊບນັ້ນພວກເຂົາຈະແກວ່ງຖິ້ມ. ເມື່ອວັນສິ້ນພິພົບກໍຈະເປັນດັ່ງນີ້ດ້ວຍ, ເທວະດາຈະລົງມາແຍກຄົນຊົ່ວອອກຈາກຄົນດີເພື່ອຖິ້ມພວກເຂົາລົງໃນຂຸມໄຟຢູ່ບ່ອນນັ້ນຈະມີແຕ່ສຽງຮ້ອງໄຫ້ ແລະກັດແຂ້ວ".

ພວກເຈົ້າເຂົ້າໃຈເລື່ອງທັງໝົດນີ້ແລ້ວບໍ?" ພວກສາວົກທູນຕອບວ່າ: "ໂດຍ ! ພວກຂ້ານ້ອຍເຂົ້າໃຈແລ້ວ." ແລະພຣະອົງຊົງກ່າວແກ່ພວກເຂົາວ່າ: "ດ້ວຍເຫດນີ້ ອາຈານພຣະຄຳພີຜູ້ໃດທີ່ມາເປັນລູກສິດແຫ່ງອານາຈັກສະຫວັນ ກໍປຽບໄດ້ກັບເຈົ້າເຮືອນທີ່ເອົາຊັບສິນທັງໃໝ່ແລະເກົ່າອອກຈາກຂຸມຊັບຂອງຕົນ."

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ: ມທ 13, 44-52**

ຫລັງຈາກທີ່ພວກເຮົາໄດ້ຟັງຄວາມປຽບທຽບເລື່ອງຜູ້ຫວ່ານ, ເລື່ອງເຂົ້າປູກດີແລະຫຍ້າເຂົ້ານົກ. ວັນນີ້ພຣະເຢຊູເຈົ້າສືບຕໍ່ກ່າວຄວາມປຽບທຽບສາມເລື່ອງກ່ຽວກັບອານາຈັກສະຫວັນ. ອານາຈັກສະຫວັນປຽບກັບຄົນຜູ້ໜຶ່ງທີ່ພົບກັບຂຸມຊັບໃນທົ່ງນາ, ອານາຈັກສະຫວັນປຽບກັບພໍ່ຄ້າທີ່ຊອກຊື້ແກ້ວມຸກດາແລະອານາຈັກສະຫວັນຍັງປຽບກັບມອງທີ່ຖິ້ມລົງໄປໃນທະເລເພື່ອກວາດເອົາປາທຸກຊະນິດ. ໃນຄວາມປຽບທຽບສາມເລື່ອງນີ້ມີຈຸດໜຶ່ງທີ່ຄ້າຍຄືກັນນັ້ນຄື: ການຮູ້ຈັກເລືອກ. ເລືອກລະຫວ່າງຂຸມຊັບທີ່ຝັງໄວ້ໃນທົ່ງນາແລະຊັບສິນທັງໝົດທີ່ຜູ້ພົບເຫັນນັ້ນມີເພື່ອແລກເອົາຂຸມຊັບນັ້ນ. ເລືອກລະຫວ່າງແກ້ວມຸກດາທີ່ມີຄ່າກັບທຸກສິ່ງທີ່ພໍ່ຄ້ານັ້ນມີເພື່ອແລກເອົາແກ້ວມຸກດານັ້ນ. ແລະທ້າຍສຸດແມ່ນການເລືອກລະຫວ່າງປາໂຕດີແລະໂຕບໍ່ດີ. ສິ່ງເຫລົ່ານີ້ສອນພວກເຮົາວ່າ ເພື່ອຈະເຂົ້າໃນອານາຈັກສະຫວັນໄດ້ນັ້ນ ພວກເຮົາຕ້ອງຮູ້ຈັກເລືອກແລະສະຫລະທຸກສິ່ງທີ່ຕົນມີເພື່ອຈະໄດ້ອານາຈັກສະຫວັນ.

ຊີວິດການເປັນກຣິສຕັງ, ເປັນສິດຂອງພຣະເຢຊູເຈົ້າຄືຊີວິດຂອງຜູ້ທີ່ຮູ້ຈັກເລືອກ. ເລືອກທີ່ຈະສະຫລະຕົວເອງ, ແບກກາງເຂນຂອງຕົນແລະຕິດຕາມພຣະອົງໄປ. ເລືອກທີ່ຈະເຂົ້າທາງປະຕູແຄບ. ເລືອກທີ່ຈະສ້າງເຮືອນຂອງຕົນບົນສີລາທີ່ໝັ້ນຄົງຖາວອນ ບໍ່ແມ່ນເທິງດິນຊາຍ. ເລືອກທີ່ຈະທຳຕາມນໍ້າພຣະໄທຂອງພຣະບິດາເຈົ້າ ບໍ່ແມ່ນທຳຕາມໃຈຕົວເອງ. ເຮັດແນວໃດພວກເຮົາຈຶ່ງແນ່ໃຈວ່າສິ່ງທີ່ພວກເຮົາເລືອກນັ້ນເປັນສິ່ງທີ່ດີສຳລັບພວກເຮົາຢ່າງແທ້ຈິງ? ສິ່ງທີ່ສາມາດບອກພວກເຮົາໃຫ້ຮູ້ວ່າການທີ່ພວກເຮົາເລືອກສິ່ງໃດໜຶ່ງນັ້ນເປັນສິ່ງທີ່ດີສຳລັບພວກເຮົາ ນັ້ນແມ່ນຄວາມຍິນດີ. ເໝືອນກັບຄົນທີ່ພົບກັບຂຸມຊັບໃນທົ່ງນາ. ຫລັງຈາກທີ່ເຂົາພົບກັບຂຸມຊັບນັ້ນ ສິ່ງທີ່ເຂົາມີກໍຄືຄວາມຍິນດີ.

ສຳລັບພວກເຮົາເດ, ຄວາມຍິນດີຂອງພວກເຮົາແມ່ນຫຍັງ? ຄວາມຍິນດີຂອງພວກເຮົາແມ່ນການໄດ້ຢູ່ດີກິນດີບໍ? ຄວາມຍິນດີຂອງພວກເຮົາແມ່ນການໃຫ້ຄົນອື່ນຍົກຍ້ອງສັນລະເສີນພວກເຮົາບໍ? ຄວາມຍິນດີຂອງພວກເຮົາແມ່ນການໄດ້ໂລກທັງໝົດມາເປັນກຳມະສິດບໍ? ຫລືຄວາມຍິນດີຂອງພວກເຮົາແມ່ນການຮັບຟັງວາຈາພຣະເຢຊູເຈົ້າແລະນຳມາປະຕິບັດໃຫ້ເກີດຜົນ? ຄວາມຍິນດີຂອງພວກເຮົາແມ່ນການທຳຕາມນໍ້າພຣະໄທຂອງພຣະບິດາເຈົ້າບໍ? ຄວາມຍິນດີຂອງພວກເຮົາແມ່ນການໄດ້ອານາຈັກສະຫວັນບໍ?

**ພາວະນາ**

ຂໍໃຫ້ວາຈາພຣະເຈົ້າວັນນີ້ຊ່ວຍພວກເຮົາໃຫ້ເບິ່ງຄືນຊີວິດການກະທຳຂອງພວກເຮົາທີ່ຜ່ານມາວ່າພວກເຮົາໄດ້ຮູ້ຈັກເລືອກເອົາສິ່ງທີ່ດີທີ່ສຸດສຳລັບຊີວິດຄວາມເຊື່ອຂອງພວກເຮົາບໍ? ແລະເມື່ອພົບກັບສິ່ງທີ່ມີຄຸນຄ່າສຳລັບຊີວິດຄວາມເຊື່ອພວກເຮົາແລ້ວ, ພວກເຮົາໄດ້ສະຫລະທຸກສິ່ງເພື່ອສິ່ງນີ້ບໍ?

ຄຸນພໍ່ ອົງຕວນ ກຽດຕິສັກ